ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ກອງປະຊຸມທະວິພາຄີ ລະຫວ່າງ ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານແຫ່ງປະເທດໄທ



ໃນລະຫວ່າງວັນທີ 10-12 ພຶດສະພາ 2023 ຄະນະຜູ້ແທນຂອງ ທະນາຄານແຫ່ງ ສປປ ລາວ ນຳໂດຍ ທ່ານ ບຸນເຫຼືອ ສິນໄຊວໍຣະວົງ, ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ໄດ້ເດີນທາງໄປຢ້ຽມຢາມ ຣາຊະອານາຈັກ ໄທ ຊຶ່ງໃນຕອນເຊົ້າ, ວັນທີ 11 ພຶດສະພາ 2023 ທີ່ ນະຄອນຫຼວງບາງກອກ, ປະເທດໄທ ໄດ້ມີກອງປະຊຸມທະວິພາຄີປະຈຳປີ 2023 ລະຫວ່າງ ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານແຫ່ງປະເທດໄທ ຊຶ່ງຝ່າຍ ທະນາຄານແຫ່ງ ສປປ ລາວ ຕາງໜ້າໂດຍ ທ່ານ ບຸນເຫຼືອ ສິນໄຊວໍຣະວົງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ແລະ ຝ່າຍ ທະນາຄານແຫ່ງປະເທດໄທ ຕາງໜ້າໂດຍ ທ່ານ ເສດທະພຸດ ສຸທິວາດນາລືພຸດ, ຜູ້ວ່າການ ທະນາຄານແຫ່ງປະເທດໄທ ພ້ອມດ້ວຍຄະນະກົມຕາງໜ້າຈາກສອງທະນາຄານກາງ ກໍ່ໄດ້ໃຫ້ກຽດເຂົ້າຮ່ວມ.

ກອງປະຊຸມດັ່ງກ່າວແມ່ນ ເພື່ອເປັນການສະຫຼຸບໝາກຜົນການຮ່ວມມືຂອງຂະແໜງການເງິນ-ເງິນຕາ ໃນໄລຍະຜ່ານມາ ແລະ ແລກປ່ຽນທັດສະນະໃນການວາງທິດທາງການຮ່ວມມືໃນຕໍ່ໜ້າ ໂດຍໄດ້ມີການປຶກສາຫາລື ແລະ ແລກປ່ຽນບົດຮຽນຮ່ວມກັນໃນຫຼາຍບັນຫາສຳຄັນຕົ້ນຕໍຄື: ສະພາບເສດຖະກິດມະຫາພາກ, ການດຳເນີນນະໂຍບາຍເງິນຕາ, ວຽກງານຄຸ້ມຄອງເງິນຕາ

ຕ່າງປະເທດ, ວຽກງານການເຊື່ອມຕໍ່ລະບົບຊໍາລະຂ້າມແດນ, ວຽກງານຄຸ້ມຄອງທະນາຄານທຸລະກິດ, ການຮ່ວມມືທາງດ້ານວິຊາການ ແລະ ບັນຫາອື່ນໆ ທີ່ສອງຝ່າຍໃຫ້ຄວາມສົນໃຈຮ່ວມກັນ.




ກອງປະຊຸມໃນຄັ້ງນີ້ ໄດ້ດໍາເນີນໄປດ້ວຍບັນຍາກາດໄມຕີຈິດມິດຕະພາບ, ຄວາມສາມັກຄີ, ການຮ່ວມມືທີ່ດີ ແລະ ສະແດງເຖິງສາຍສໍາພັນຮ່ວມມືມິດຕະພາບແບບບ້ານໃກ້ເຮືອນຄຽງທີ່ດີ ລະຫວ່າງສອງຊາດ ລາວ-ໄທ ກໍ່ຄືສອງທະນາຄານກາງພວກເຮົາ ແລະ ສາມາດບັນລຸຜົນສໍາເລັດຕາມລະດັບຄາດໝາຍ. ຜົນສໍາເລັດຂອງກອງປະຊຸມຄັ້ງນີ້ ຖືເປັນຂີດໝາຍອັນສໍາຄັນໃນການເສີມຂະຫຍາຍສາຍພົວພັນຮ່ວມມືຂອງສອງປະເທດ ເວົ້າລວມ, ເວົ້າສະເພາະກໍ່ຄື ສອງທະນາຄານກາງໃຫ້ນັບມື້ນັບເພີ່ມທະວີຄວາມສະໜິດແໜ້ນ, ຄວາມສາມັກມິດຕະພາບ ແລະ ການຮ່ວມມືທີ່ເລິກຊຶ້ງຫຼາຍຂຶ້ນກວ່າເກົ່າ.

**# ຂ່າວ-ພາບ: ກົມຮ່ວມມືສາກົນ.**

## ເສດຖະກິດຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງກັນນໍາໃຊ້ເງິນກີບ